ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 287/ກຈພງ

ນະຄອນຫຼວງວຽງຈັນ, ວັນທີ: 26 ເມສາ 2023

<u>ແຈ້ງການ</u>

**ເລື່ອງ : ປະກາດຮັບສະໝັກສອບເສັງລັດຖະກອນໃໝ່ ປະຈຳປີ 2023.**

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0113/ອຄ, ລົງວັນທີ 17 ກຸມພາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນ ໄຫວ ຂອງກົມຈັດຕັ້ງ ແລະ ພະນັກງານ
- ອີງຕາມ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 18/ນຍ, ລົງວັນທີ 17 ມັງກອນ 2023 ວ່າດ້ວຍການແບ່ງຕົວເລກລັດຖະກອນໃໝ່ ປີ 2023.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການແບ່ງປັນຕົວເລກລັດຖະກອນໃໝ່ ປະຈຳປີ 2023 ໃຫ້ຂັ້ນສູນກາງ (ບັນດາກົມຢູ່ອ້ອມຂ້າງກະຊວງ) ແລະ ຂັ້ນທ້ອງຖິ່ນ ສະບັບເລກທີ 0460/ອຄ, ລົງວັນທີ 03 ເມສາ 2023.

ກົມຈັດຕັ້ງ ແລະ ພະນັກງານ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາທ່ານທີ່ມີຄວາມສົນໃຈ ແລະ ມີວິຊາສະເພາະທີ່ສອດຄ່ອງກັບຕຳແໜ່ງງານ ຂອງບັນດາກົມ ອ້ອມຂ້າງກະຊວງອຸດສາຫະກຳ ແລະ ການຄ້າເພື່ອສະໝັກເຂົ້າສອບເສັງລັດຖະກອນໃໝ່ ປະຈຳປີ 2023 ຈຳນວນ 03 ໂກຕ້າ ດັ່ງມີລາຍລະອຽດລຸ່ມນີ້:

➢ <u>ມາດຖານເງື່ອນໄຂລວມຂອງຜູ້ທີ່ຈະສະໝັກເຂົ້າສອບເສັງ:</u>

1. ຖືສັນຊາດລາວໂດຍກຳເນີດ, ມີອາຍຸບໍ່ເກີນ 35 ປີ.
2. ເປັນພົນລະເມືອງດີ, ມີຄຸນສົມບັດດີ, ມີຄວາມຈົງຮັກພັກດີຕໍ່ລະບອບປະຊາທິປະໄຕ ປະຊາຊົນ.
3. ບໍ່ເຄີຍຖືກສານປະຊາຊົນ ຕັດສິນລົງໂທດ ແລະ ບໍ່ຖືກລົງວິໄນຈາກອົງການຈັດຕັ້ງຕ່າງໆ.
4. ມີປະຫວັດການເຄື່ອນໄຫວຂອງຕົນ ແລະ ຄອບຄົວ ທີ່ຈະແຈ້ງ.
5. ມີວິຊາສະເພາະໃຫ້ສອດຄ່ອງກັບຕຳແໜ່ງງານທີ່ປະກາດຮັບສະໝັກ.
6. ມີສຸຂະພາບແຂງແຮງ ແລະ ມະນຸດສຳພັນດີ.


ກົມຈັດຕັ້ງ ແລະ ພະນັກງານ ; ກະຊວງອຸດສາຫະກຳ ແລະ ການຄ້າ.
ຕິດຕໍ່ສອບຖາມ: (+856-21) 454 903 ; ແຟັກ: (+856-21) 416 139.

Scanned with CamScanner

➢ ວິຊາສະເພາະທີ່ຕ້ອງການ ແລະ ມາດຖານເງື່ອນໄຂຂອງບັນດາກົມມີດັ່ງນີ້:

| ລ/ດ | ລາຍຊື່ບັນດາກົມ | ຊັ້ນ/ວິຊາສະເພາະ | ມາດຖານເງື່ອນໄຂສະເພາະຂອງຜູ້ສະໝັກສອບເສັງ | ໝາຍເຫດ |
|---|---|---|---|---|
| 1 | ກົມນະໂຍບາຍການຄ້າຕ່າງປະເທດ (01 ຕໍາແໜ່ງ) | (ປະລິນຍາຕີຂຶ້ນໄປ)<br>-ການຄ້າສາກົນ ຫຼື ເສດຖະສາດລະຫວ່າງປະເທດ<br>-ບໍລິຫານທຸລະກິດ<br>-ການຕະຫຼາດ | -ສາມາດເວົ້າ, ອ່ານ, ຟັງ ແລະ ຂຽນພາສາອັງ ກິດ ຫຼື ພາສາຕ່າງປະເທດໃດໜຶ່ງ<br>-ມີຄວາມຮູ້ພື້ນຖານໃນການນໍາໃຊ້ຄອມພິວເຕີ Microsoft Office ໃນລະດັບດີ | ຜູ້ສະໝັກທີ່ມີມາດຖານເງື່ອນໄຂຖືກຕ້ອງ ແລະ ຜ່ານການຄັດເລືອກເຂົ້າຮ່ວມສອບເສັງແມ່ນຈະໄດ້ຮັບການຕິດຕໍ່ຈາກກົມກ່ຽວຂ້ອງ. |
| 2 | ກົມອຸດສາຫະກໍາ ແລະ ຫັດຖະກໍາ (01 ຕໍາແໜ່ງ) | (ປະລິນຍາຕີຂຶ້ນໄປ)<br>-ກົດໝາຍ<br>-ພົວພັນສາກົນ | | |
| 3 | ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (01 ຕໍາແໜ່ງ) | (ປະລິນຍາຕີຂຶ້ນໄປ)<br>-ບໍລິຫານທຸລະກິດ<br>-ເສດຖະສາດ<br>-ການເງິນ-ການບັນຊີ | | |

- ❖ ເປີດດາວໂຫຼດຟອມສະໝັກສອບເສັງ ວັນທີ 27 ເມສາ - 04 ພຶດສະພາ 2023.
- ❖ ປິດຮັບສະໝັກຟອມສອບເສັງ ວັນທີ 04 ພຶດສະພາ 2023 (ຕາມວັນເວລາລັດຖະການ).
- ❖ ຜູ້ທີ່ຟອມສະໝັກຜ່ານການຄັດເລືອກກົມກ່ຽວຂ້ອງຈະໂທປະສານໃຫ້ເຂົ້າຮ່ວມສອບເສັງ.
- ❖ ກໍານົດມື້ສອບເສັງ ວັນທີ 08 ພຶດສະພາ 2023 ເວລາ 8:30 ໂມງ ທີ່ຫ້ອງປະຊຸມໃຫຍ່ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ.
- ❖ ຕິດຕໍ່ພົວພັນສອບເສັງທີ່ ກົມຈັດຕັ້ງ ແລະ ພະນັກງານ ກະຊວງອຸດສາຫະກໍາ ແລະ ການຄ້າ ຊັ້ນ 3.
- ❖ ໂທຕິດຕໍ່ພົວພັນສອບຖາມ: 021 454903, 021 416139 ແລະ ສາມາດຕິດຕາມລາຍລະອຽດດາວໂຫຼດແບບຟອມສະໝັກ ໄດ້ໃນ:
  - http://www.moic.gov.la/
  - https://dosmep.org/

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ເຂົ້າຮ່ວມສະໝັກ ຕາມແຈ້ງການດ້ວຍ.

ຫົວໜ້າກົມ

ສາມາດສະແກນເພື່ອດາວໂຫຼດແບບຟອມສະໝັກໄດ້ທີ່ນີ້

ກະຊວງອຸດສາຫະກໍາ ແລະ ການຄ້າ
ກົມຈັດຕັ້ງ ແລະ ພະນັກງານ

ນ.ກ່ຽງສະດອນ ເພັດດາວເຮືອງ


ກົມຈັດຕັ້ງ ແລະ ພະນັກງານ ; ກະຊວງອຸດສາຫະກໍາ ແລະ ການຄ້າ.
ຕິດຕໍ່ສອບຖາມ: (+856-21) 454 903 ; ແຟັກ: (+856-21) 416 139.

Scanned with CamScanner